ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LALCO
LAO ASEAN LEASING PUBLIC COMPANY

ເລກທີ 0000/7157

ນະຄອນຫຼວງວຽງຈັນ, ວັນທີ 06/08/2021

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ເປີດເຜີຍຄວາມຄືບໜ້າການກະກຽມ ເອກະສານລາຍງານການເງິນ ແລະ ເປີດເຜີຍຂໍ້ມູນຕາມຮອບວຽນ ບັນຊີ ປະຈຳປີ 2020 ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ ລົງວັນທີ 27 ກັນຍາ 2018
- ອີງຕາມໜັງແຈ້ງກ່ຽວກັບມາດຕະການຂອງ ຕລຊລ ຕໍ່ກັບການເປີດເຜີຍຂໍ້ມູນຕາມຮອບວຽນປະຈຳປີ 2020 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອມະຫາຊົນ ບໍ່ທັນຕາມກຳນົດ ເລກທີ 455/ຕລຊລ ວັນທີ 06 ສິງຫາ ປີ 2021

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບຕາມທີ່ ຕລຊ ຮຽກໃຫ້ ລອຊ ດຳເນີນການຕາມລາຍລະອຽດດັ່ງນີ້:

1. ເນື່ອງຈາກ ບໍລິສັດຫັນມາໃຊ້ມາດຕະຖານບັນຊີສາກົນ IFRS ແລະ ຜົນກະທົບຂອງ Covid (ສະຖານະການໃນປະຈຸບັນ) ຕາມທີ່ ລອຊ ໄດ້ເປີດເຜີຍໄປໃນວັນທີ 30 ເມສາ ປີ 2021. ປະຈຸບັນນີ້ບໍລິສັດໄດ້ສົ່ງຂໍ້ມູນລາຍງານຈຳນວນໜຶ່ງ ກໍ່ຄື ລາຍຮັບ, ການເກັບກຳໜີ້,...ຊຶ່ງເອກະສານລາຍງານປະຈຳປີ 2020 ກຳລັງຢູ່ໃນຂັ້ນຕອນການດຳເນີນງານ.

2. ລອຊ ໃຫ້ຄຳໝັ້ນສັນຍາວ່າຈະເປີດເຜີຍລາຍງານຖານະການເງິນ ແລະ ປິດລາຍງານປະຈຳປີ 2020 ໃນວັນທີ 20 ສິງຫາ 2021.

3. ບໍລິສັດຄາດວ່າຈະໃຫ້ໄດ້ຈັດກອງປະຊຸມຜູ້ຖືຮຸ້ນພາຍໃນ 1 ເດືອນ ຫຼັງຈາກແລ້ວເອກະສານລາຍງານການເງິນປີ 2020. ສ່ວນເລື່ອງລາຍລະອຽດແມ່ນ ລອຊ ຈະແຈ້ງໃຫ້ທ່ານຊາບພາຍຫຼັງ.

ດັ່ງນັ້ນ ບໍລິສັດຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ.
ດ້ວຍຄວາມເຄົາລົບນັບຖື

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ປະທານສະພາບໍລິຫານ

ທ່ານ ນາງ ຣິຊ່າ ຢາມາກູຈິ